# Course: Human Development Economics

# Week 9

## Policies and Strategies for Human Development

Phavone Keodouangkham

Souphanouvong University

# ວິຊາ: ເສດຖະສາດພັດທະນາຊັບພະຍາກອນມະນຸດ

## ອາທິດທີ 9

## ນະໂຍບາຍ ແລະ ຍຸດທະສາດ ສໍາລັບການພັດທະນາມະນຸດ

ພາວອນ ແກ້ວດວງຄໍາ

ມະຫາວິທະຍາໄລ ສຸພານຸວົງ

# ເນື້ອໃນການນຳສະເໜີ

- ນະໂຍບາຍ ແລະ ຍຸດທະສາດສຳລັບການຫລຸດຜ່ອນຄວາມທຸກຍາກ
- ການຂະຫຍາຍຕົວແບບຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ.
- ນະໂຍບາຍສຳລັບການພັດທະນາແບບສົມດຸນຂອງພາກສ່ວນເສດຖະກິດ ແລະ ສັງຄົມ
- ການພັດທະນາມະນຸດ ແລະ ເປົ້າຫມາຍສະຫັດສະວັດດ້ານການພັດທະນາ (MDGs)
- ການພັດທະນາມະນຸດ ແລະ ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ

# ນະໂຍບາຍ ແລະ ຍຸດທະສາດສຳລັບການ ຫລຸດຜ່ອນຄວາມທຸກຍາກ

ມີນັກເສດຖະສາດ ແລະ ນັກພັດທະນາຫລາຍທ່ານໄດ້ສຶກສາຄົ້ນຄວ້າກ່ຽວກັບວ່າເຮັດແນວໃດຈຶ່ງຈະແກ້ໄຂ ຫລື ຫລຸດຜ່ອນຄວາມທຸກຍາກໄດ້. ທ່ານ George ໄດ້ກ່າວວ່າຄຳຖາມລວມທີ່ໄດ້ກຳນົດໃນທີ່ນີ້ແມ່ນຊາດທີ່ ຮັ່ງມີ ມີພາລະຫນ້າທີ່ ທີ່ຈະຕ້ອງກະຈ່າຍຊັບພະຍາກອນໃຫ້ຊາດທີ່ທຸກຍາກແນວໃດ? ສົມມຸດວ່າ ພາລະຫນ້າທີ່ໃນການ ເຮັດໃຫ້ຄວາມທຸກຍາກຫລຸດລົງ ແມ່ນຫນ້າທີ່ຂອງຊາດແທນທີ່ຈະແມ່ນຫນ້າທີ່ຂອງພົນລະເມືອງຄົນໃດຄົນຫນຶ່ງ.

ຄວາມທຸກຍາກ ແລະ ການຫລຸດຜ່ອນຄວາມທຸກຍາກເປັນທີ່ເຂົ້າໃຈກັນດີດ້ວຍເຫດຜົນທີ່ຊັດເຈນໃນແງ່ຂອງການເຕີບໂຕທາງເສດຖະກິດ. ການເພີ່ມຂຶ້ນຂອງລາຍໄດ້ແຫ່ງຊາດຕໍ່ຫົວຄົນ ລ້ວນແຕ່ເປັນຜົນເຮັດໃຫ້ດັດຊະນີອາຍຸຍືນຂອງ ມະນຸດເພີ່ມຂຶ້ນ ແລະ ອັດຕາການຕາຍຂອງເດັກຫລຸດລົງ.

ຈາກການຄົ້ນຄວ້າຂອງນັກຄົ້ນຄວ້າຊີ້ໃຫ້ເຫັນວ່າ ການເພີ່ມຂຶ້ນຂອງລາຍໄດ້ຕໍ່ຫົວ 1 % ອາດເຮັດໃຫ້ຄວາມທຸກຍາກຫລຸດລົງຫລາຍທີ່ສຸດປະມານ 4 % ຫລື ອາດຈະຫນ້ອຍກວ່າ 1 % ກໍ່ເປັນໄດ້, ທັງນີ້ຂຶ້ນກັບເງື່ອນ ໄຂຂອງປະເທດໃນຊ່ວງເລີ່ມຕົ້ນຂອງການພັດທະນາ ເຊັ່ນ: ການກະຈາຍລາຍໄດ້, ຄວາມເປັນເຈົ້າການ (ownership) ແລະ ອື່ນໆ.

ໂດຍທົ່ວໄປແລ້ວ, ເກືອບທຸກໆຫລັກຖານຢັ້ງຢືນໃຫ້ເຫັນວ່າ ການຫລຸດຜ່ອນຄວາມທຸກຍາກແມ່ນຂຶ້ນ ກັບຄວາມໄວ (Pace) ແລະ ຮູບແບບຂອງການພັດທະນາທາງເສດຖະກິດ ແຕ່ເຮັດແນວໃດຈຶ່ງຈະໄດ້ຮູບແບບທີ່ດີທີ່ສຸດນີ້?

ຄຳຕອບກໍ່ຄືຕ້ອງປະສົມກົມກຽວກັນລະຫວ່າງແນວທາງການສະໜັບສະໜູນຄວາມທຸກຍາກກັບການສົ່ງເສີມການເຕີບໂຕ (Pro-poor and pro-growth approaches) ແນວທາງນີ້ເປັນກຳລັງແຮງກະຕຸ້ນ (ການຫລຸດຜ່ອນຄວາມທຸກຍາກ ແລະ ການເຕີບໂຕ) ແລະ ຕ້ອງໄປຄຽງຄູ່ກັນ.

- ນິຍາມ ແລະ ມາດຖານຄວາມທຸກຍາກທີ່ສາກົນໄດ້ວາງອອກ ຄື: ຄວາມທຸກຍາກ ໂດຍທົ່ວໄປແມ່ນຫມາຍເຖິງການ ຢູ່ໃນສະພາບຄວາມທຸກ ແລະ ຂາດເຂີນປັດໄຈການດໍາລົງຊີວິດພື້ນຖານທີ່ຈໍາເປັນ, ອີງຕາມແນວຄິດຄວາມທຸກຍາກແບບສົມບູນແລ້ວ, ຄົນທຸກແມ່ນຫມາຍເຖິງຄົນທີ່ດໍາລົງຊີວິດທີ່ຕ່ໍາກວ່າຄວາມຕ້ອງການຂັ້ນຕ່ໍາບໍ່ວ່າຈະເປັນອາຫານ, ທີ່ຢູ່ອາໄສ ຫລື ສິນຄ້າທີ່ຈໍາເປັນອື່ນ. ທະນາຄານໂລກໄດ້ກໍານົດຕົວຊີ້ວັດຄວາມທຸກຍາກໂດຍກໍານົດຜູ້ທີ່ມີລາຍໄດ້ຕໍ່າກ່ວາ 1.25 ໂດລາສະຫະລັດຕໍ່ມື້ຕໍ່ຄົນແມ່ນຖືວ່າເປັນຄົນທຸກ. ເຊິ່ງມາດຕະຖານຄວາມທຸກຍາກນີ້ຖືວ່າເປັນມາດຕະຖານຄວາມທຸກຍາກສາກົນນອກຈາກນີ້, ໃນປະເທດຕ່າງໆກໍ່ໄດ້ກໍານົດເສັ້ນຄວາມທຸກຍາກຂອງປະເທດຕົນເອງ ໂດຍອາໄສຂໍ້ມູນຂອງການສໍາຫລວດການຊົມໃຊ້ ແລະ ການບໍລິໂພກເຊິ່ງກໍານົດໃຫ້ໃຜກໍ່ຕາມທີ່ມີລາຍໄດ້ຕໍ່າກວ່າ 50% ຂອງລາຍໄດ້ສະເລ່ຍແຫ່ງຊາດແມ່ນເປັນຄົນທຸກ.

ພ້ອມດຽວກັນນີ້, ໃນປີ 2010 ອົງການສະຫະປະຊາຊາດກໍ່ໄດ້ມີການສ້າງດັດຊະນີວັດແທກຄວາມທຸກຍາກທີ່ເອີ້ນວ່າ ດັດຊະນີຄວາມທຸກຍາກຫລາຍມິຕິ Multidimensional Poverty Index (MPI) ເຊິ່ງວັດແທກຈາກການຂາດເຂີນແບບທະວີຄູນໃນຄົວເຮືອນດຽວກັນທາງດ້ານການສຶກສາ, ສາທາລະນະສຸກ ແລະ ມາດຖານການດໍາລົງຊີວິດ, ມິຕິທາງດ້ານການສຶກສາ ແລະ ສາທາລະນະສຸກແມ່ນອີງໃສ່ສອງຕົວຊີ້ວັດ, ສໍາລັບມາດຖານການດໍາລົງຊີວິດແມ່ນອີງໃສ່ຫົກຕົວຊີ້ວັດ.

ນະໂຍບາຍ ແລະ ຍຸດທະສາດສຳລັບການຫລຸດຜ່ອນຄວາມທຸກຍາກນັ້ນ ມັນໄດ້ຖືກຈັດເຂົ້າເປັນວາລະສຳຄັນທີ່ນາໆຊາດພາກັນໃຫ້ຄວາມຮ່ວມມືໃນການວາງນະໂຍບາຍເພື່ອແກ້ບັນຫາດັ່ງກ່າວ. ບັນດານະໂຍບາຍຫຼຸດຜ່ອນຄວາມທຸກຍາກດັ່ງກ່າວ ແມ່ນໄດ້ຖືກບັນຈຸໄວ້ຢູ່ໃນເປົ້າຫມາຍການພັດທະນາຂອງອົງການສະຫະປະຊາຊາດ, ນັ້ນກໍ່ຄືເປົ້າໝາຍສະຫັດສະວັດນັ້ນເອງ. ຈາກເປົ້າຫມາຍສະຫັດສະວັດທັງຫມົດ 9 ເປົ້າຫມາຍ, ມີເຖິງ 7 ເປົ້າຫມາຍທີ່ກ່ຽວຂ້ອງໂດຍກົງກັບການຫລຸດຜ່ອນຄວາມທຸກຍາກ.

# ການຂະຫຍາຍຕົວແບບຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ

ການພັດທະນາແບບຍືນຍົງ ແລະ ພັດທະນາແບບຮັກສາສິ່ງແວດລ້ອມ ແມ່ນໄດ້ຖືກບັນຈຸໄວ້ໃນແກນຫລັກຂອງ ການພັດທະນາມະນຸດ. ເນື່ອງຈາກວ່າ ການທີ່ຈະສາມາດມີການພັດທະນາແບບຍືນຍົງໄດ້ນັ້ນ, ມັນຕ້ອງໄດ້ອາໄສ 3 ເສົາຄ້ຳຫຼັກ ຄື:

- ເສດຖະກິດທີ່ຍືນຍົງ
- ສະພາບແວດລ້ອມທີ່ຍືນຍົງ
- ສັງຄົມທີ່ຍືນຍົງ

ເນື່ອງຈາກວ່າມະນຸດເປັນຈຸດໃຈກາງໃນທຸກດ້ານຂອງການພັດທະນາມະນຸດ, ການພັດທະນາຈະບໍ່ຍືນຍົງ ຖ້າຫາກຜົນປະໂຫຍດທີ່ໄດ້ຈາກການຂະຫຍາຍໂຕທາງດ້ານເສດຖະກິດບໍ່ທົ່ວເຖິງ, ແບ່ງປັນບໍ່ເປັນທຳກໍ່ຈະເປັນທີ່ມາຂອງ ການເຮັດໃຫ້ສັງຄົມເກີດຂໍ້ຂັດແຍງ. ນອກຈາກນີ້, ການພັດທະນາທີ່ບໍ່ໄດ້ພິຈາລະນາເຖິງສິ່ງແວດລ້ອມແລ້ວມັນຈະເຮັດໃຫ້ສັງຄົມມີຄວາມສ່ຽງໄພທາງດ້ານໄພພິບັດທາງທຳມະຊາດ ແລະ ສະພາບແວດລ້ອມທີ່ເປັນພິດ ສິ່ງຕ່າງໆເຫລົ່ານີ້ຈະບໍ່ສາມາດເຮັດໃຫ້ສັງຄົມຄົງຢູ່ໄດ້ ແລະ ໃນທີ່ສຸດການພັດທະນາທາງດ້ານເສດຖະກິດກໍ່ຈະພັງທະລາຍລົງ.

ເພື່ອເປັນການຮັບປະກັນໃຫ້ມີການຂະຫຍາຍໂຕແບບຮັກສາສະພາບແວດລ້ອມ, ໃນປີ 2012 ຄະນະກຳມະການ ເພື່ອການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (The Organization for Economic Cooperation and Development ຫລື OECD) ໄດ້ສ້າງກອບແນວຄວາມຄິດເພື່ອການຂະຫຍາຍໂຕແບບຮັກສາ ສິ່ງແວດລ້ອມສຳລັບປະເທດກຳລັງພັດທະນາ ໂດຍກອບແນວຄວາມຄິດດັ່ງກ່າວອີງໃສ່ສາມມິຕິ ດັ່ງນີ້:

## ມິຕິທີ 1

ແມ່ນແຜນການຂະຫຍາຍໂຕແບບຮັກສາສິ່ງແວດລ້ອມລະດັບຊາດ ເພື່ອສ້າງເງື່ອນໄຂປະກອບດ້ວຍ 6 ເງື່ອນໄຂລະດັບຊາດ ຄື: ການເຄື່ອນຍ້າຍການໃຊ້ຈ່າຍພາກລັດເຂົ້າສູ່ການຮັກສາສິ່ງແວດລ້ອມ, ສ້າງກົດຫມາຍ ແລະ ການບັງຄັບໃຊ້ກົດຫມາຍທີ່ມີປະສິດທິພາບ, ກຳນົດຂອບເຂດສິດນຳໃຊ້ຊັບພະຍາກອນ ແລະ ທີ່ດິນ, ສ້າງເງື່ອນໄຂ ເພື່ອປ່ຽນທັດສະນະຄະຕິໃຫ້ມີຄວາມຕື່ນຕົວກັບການຮັກສາສະພາບແວດລ້ອມ, ອຳນວຍຄວາມສະດວກໃຫ້ທຸລະກິດມີຄວາມຕື່ນໂຕຕໍ່ກັບການຮັກສາສິ່ງແວດລ້ອມ.

# ມິຕິທີ 2

ກົນໄກການຂະຫຍາຍໂຕແບບຮັກສາສິ່ງແວດລ້ອມໃຫ້ກາຍເປັນກົນໄກຫລັກປະກອບມີ 5 ກົນໄກຍ່ອຍຄື: ກວດຄືນການໃຊ້ຈ່າຍທາງດ້ານສິ່ງແວດລ້ອມຂອງພາກລັດ, ປະເມີນຍຸດທະສາດທີ່ກ່ຽວກັບການຮັກສາສິ່ງແວດລ້ອມ, ຕັ້ງຄະນະກຳມະການເພື່ອການພັດທະນາທີ່ຍືນຍົງ, ສ້າງການວັດແທກການພັດທະນາທີ່ອີງໃສການຮັກສາສິ່ງແວດລ້ອມ.

## ມິຕິທີ 3

ໃຊ້ນະໂຍບາຍການຂະຫຍາຍໂຕແບບຮັກສາສິ່ງແວດລ້ອມ ເພື່ອຈູງໃຈໃຫ້ມີການຮັກສາສິ່ງແວດລ້ອມປະກອບດ້ວຍ: ອອກເອກະສານຮັບຮອງສໍາລັບການຜະລິດ ແລະ ການຄ້າທີ່ມີຄວາມຍືນຍົງ ແລະ ຮັກສາສິ່ງແວດລ້ອມ, ໃຫ້ເງິນອຸດຫນູນການປະຕິຮູບເພື່ອການຜະລິດແບບອານຸລັກສິ່ງແວດລ້ອມ, ປະຕິຮູບນະໂຍບາຍເງິນຕາທີ່ກ່ຽວກັບການອານຸລັກສິ່ງແວດລ້ອມ, ສ້າງກອບແນວຄວາມຄິດ ແລະ ໃຫ້ການສະຫນັບສະຫນູນການລົງທຶນໃນພະລັງງານຂຽວ, ສ້າງຜູ້ປະກອບການສີຂຽວ, ການຈັດຊື້ຈັດຈ້າງຂອງພາກລັດທີ່ມີຄວາມຍືນຍົງ ແລະ ສ້າງນະວັດຕະກໍາສີຂຽວ.

# ນະໂຍບາຍສໍາລັບການພັດທະນາແບບສົມດຸນ ຂອງພາກສ່ວນເສດຖະກິດ ແລະ ສັງຄົມ

ເຖິງແມ່ນວ່າການຂະຫຍາຍໂຕທາງດ້ານເສດຖະກິດ ນອນຢູ່ໃນອົງປະກອບຫນຶ່ງຂອງການພັດທະນາມະນຸດກໍຄືການທີ່ມະນຸດສາມາດໃຊ້ຊີວິດຢູ່ໃນມາດຖານການດໍາລົງຊີວິດທີ່ເຫມາະສົມ, ການຂະຫຍາຍໂຕທາງດ້ານເສດຖະກິດພຽງດ້ານດຽວບໍ່ສາມາດຮັບປະກັນການພັດທະນາມະນຸດທີ່ມີຄວາມຍືນຍົງໄດ້, ເນື່ອງຈາກວ່າການພັດທະນາ ແລະ ການຂະຫຍາຍໂຕທາງດ້ານເສດຖະກິດຈະສົ່ງຜົນຕໍ່ກັບຄົນທຸກກໍ່ຕໍ່ເມື່ອຄົນເຫລົ່ານັ້ນໄດ້ຮັບສ່ວນແບ່ງຈາກລາຍຮັບທີ່ເພີ່ມຂຶ້ນໃນລະບົບເສດຖະກິດເທົ່ານັ້ນ.

ການພັດທະນາ ແລະ ຂະຫຍາຍໂຕທາງດ້ານເສດຖະກິດ ແມ່ນມີຄວາມຈຳເປັນຕໍ່ການພັດທະນາມະນຸດ ແຕ່ວ່າໃນໄລຍະສັ້ນອາດຈະຕ້ອງໄດ້ເລືອກ. ລັດຖະບານຈະຕ້ອງເລືອກລະຫວ່າງລາຍໄດ້ທີ່ເພີ່ມຂຶ້ນ ແລະ ເປົ້າຫມາຍທີ່ບໍ່ແມ່ນລາຍໄດ້. ດັ່ງນັ້ນ, ເປົ້າຫມາຍຂອງນະໂຍບາຍການພັດທະນາ, ສ້າງຄວາມສົມດຸນລະຫວ່າງການເພີ່ມຂຶ້ນຂອງລາຍໄດ້ ແລະ ເປົ້າຫມາຍໃນການພັດທະນາອື່ນທີ່ບໍ່ແມ່ນເສດຖະກິດມີຂັ້ນຕອນຕ່າງໆດັ່ງຕໍ່ໄປນີ້:

1

ໃນການລົງທຶນພາກລັດຕ່າງໆ ລັດຖະບານຈະຕ້ອງໄດ້ຄຳນຶງເຖິງສິ່ງຕ່າງໆທີ່ພົວພັນກັບສັງຄົມ.

2

ສ້າງແຮງຈູງໃຈໃຫ້ແກ່ພາກເອກະຊົນເພື່ອລົງທຶນໃນຂະແໜງການທີ່ສັງຄົມຕ້ອງການ.

3

ການວາງນະໂຍບາຍເພື່ອເຮັດໃຫ້ປະຊາຊົນມີອຳນາດ ແລະ ມີສ່ວນຮ່ວມໃນການພັດທະນາໂດຍສະເພາະແມ່ນກຸ່ມຄົນທີ່ຂາດໂອກາດ ເຊັ່ນ: ຄົນທຸກ, ຜູ້ທີ່ອາໄສຢູ່ຫ່າງໄກສອກຫລີກ,ຄົນພິການ, ແມ່ຍິງ ແລະ ຜູ້ດ້ອຍໂອກາດອື່ນໆ.

# ການພັດທະນາມະນຸດ ແລະ ເປົ້າຫມາຍສະຫັດສະວັດດ້ານການພັດທະນາ (MDGs)

ການພັດທະນາມະນຸດ ແລະ ເປົ້າຫມາຍສະຫັດສະວັດສ້າງຂຶ້ນມາຈາກແຮງຈູງໃຈ ແລະ ແນວຄວາມຄິດທີ່ຄ້າຍຄືກັນ. ການພັດທະນາມະນຸດແມ່ນກ່ຽວຂ້ອງກັບຄົນ, ເຊິ່ງເປັນການຂະຫຍາຍທາງເລືອກ ໃນການດຳລົງຊີວິດຢ່າງມີກຽດ ແລະ ອິດສະຫລະພາບ.

ສຳລັບເປົ້າຫມາຍສະຫັດສະວັດແລ້ວ ມັນແມ່ນແມ່ແບບສຳລັບການພັດທະນາມະນຸດ, ພ້ອມທັງຍັງເປັນເຄື່ອງມືເພື່ອຊ່ວຍໃນການຕິດຕາມ ແລະ ຊ່ວຍໃຫ້ໄດ້ຮັບຫມາກຜົນທີ່ສູງຂຶ້ນເພື່ອການດຳລົງຊີວິດທີ່ດີຂຶ້ນ.

ການຂະຫຍາຍຕົວທາງດ້ານເສດຖະກິດ ແມ່ນມີຄວາມຈຳເປັນຕໍ່ການພັດທະນາ ແຕ່ມັນກໍ່ບໍ່ແມ່ນທັງຫມົດ, ເນື່ອງຈາກວ່າ ການຂະຫຍາຍໂຕທາງເສດຖະກິດຈະສະຫນັບສະຫນູນການພັດທະນາ ຫາກມັນມີການແຈກຢາຍຢ່າງເທົ່າທຽມກັນ. ເພື່ອໃຫ້ສາມາດບັນລຸໄດ້ຕາມເປົ້າຫມາຍຂອງການພັດທະນາມະນຸດ, ເປົ້າຫມາຍສະຫັດສະວັດຈະເປັນຕົວຊ່ວຍຕົວຫນຶ່ງທີ່ສຳຄັນໃນການບັນລຸເປົ້າໝາຍດັ່ງກ່າວ.

# ເປົ້າຫມາຍສະຫັດສະວັດດ້ານການພັດທະນາ

**ເປົ້າຫມາຍທີ 1:**ລຶບລ້າງຄວາມທຸກຍາກ ແລະ ໄພອຶດຫິວ: ແມ່ນເພື່ອ ຫລຸດຜ່ອນຈຳນວນປະຊາຊົນຜູ້ທຸກຍາກໃຫ້ຢູ່ໃນລະດັບ 24 % ພາຍໃນປີ 2015.

**ເປົ້າຫມາຍທີ 2:** ໃຫ້ທຸກຄົນໄດ້ຮັບການສຶກສາຢ່າງທົ່ວເຖິງ: ແມ່ນເພື່ອ ຮັບປະກັນວ່າພາຍໃນປີ 2015 ເດັກນ້ອຍທັງຍິງ ແລະ ຊາຍທີ່ຢູ່ໃນໄວເຂົ້າຮຽນໃນ ຊັ້ນປະຖົມໄດ້ເຂົ້າໂຮງຮຽນຢ່າງທົ່ວເຖິງກັນ. ນອກນັ້ນ, ຍັງຕ້ອງໄດ້ສຸມທຸກຄວາມ ພະຍາຍາມເພື່ອປັບປຸງຄຸນນະພາບ ແລະ ປະລິມານຂອງອຸປະກອນການສຶກສາ, ລວມທັງປັບປຸງ ຄຸນນະພາບຂອງຄູອາຈານ.

# ເປົ້າຫມາຍສະຫັດສະວັດດ້ານການພັດທະນາ

**ເປົ້າຫມາຍທີ 3:** ສົ່ງເສີມບົດບາດຍິງ-ຊາຍ: ແມ່ນຮຽກຮ້ອງໃຫ້ທຸກປະເທດຕ້ອງຮັບປະກັນວ່າເດັກຍິງສາມາດເຂົ້າເຖິງການສຶກສາໃນລະດັບເທົ່າທຽມກັບເພດຊາຍພາຍໃນປີ 2015 ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

**ເປົ້າຫມາຍທີ 4:** ຫລຸດຜ່ອນອັດຕາການຕາຍຂອງເດັກ: ແມ່ນເພື່ອຫລຸດຜ່ອນທ່າອ່ຽງການຕາຍຂອງເດັກດັ່ງກ່າວລົງໃຫ້ຍັງເຫລືອພຽງແຕ່ 55 ຄົນຕໍ່ເດັກເກີດ 1000 ຄົນພາຍໃນປີ 2015 ດ້ວຍການບໍລິການທາງການແພດທີ່ດີຂຶ້ນ ແລະ ຕ້ອງຮັບປະກັນວ່າບັນຫາຊົນເຜົ່າ ແລະ ຄວາມແຕກຕ່າງດ້ານພາສາໄດ້ຮັບການເອົາໃຈໃສ່.

# ເປົ້າຫມາຍສະຫັດສະວັດດ້ານການພັດທະນາ

**ເປົ້າຫມາຍທີ 5:** ປັບປຸງສຸຂະພາບຂອງແມ່ ມີຈຸດປະສົງເພື່ອຫລຸດຜ່ອນອັດຕາການຕາຍຂອງແມ່ໃຫ້ເຫລືອພຽງ ແຕ່ 185 ຄົນຕໍ່ເດັກເກີດມີຊີວິດ 100.000 ຄົນໃນປີ 2015.

**ເປົ້າຫມາຍທີ 6:** ຕ້ານກັບພະຍາດ HIV/AIDS, ມາລາເລຍ ແລະ ເຊື້ອພະຍາດອື່ນໆໃຫ້ຫລຸດລົງເຄິ່ງຫນຶ່ງພາຍໃນປີ 2015.

**ເປົ້າຫມາຍທີ 7:** ຮັບປະກັນຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແນໃສ່ເພື່ອການຈັດຕັ້ງປະຕິບັດບັນດາຫລັກການພື້ນຖານຂອງການພັດທະນາແບບຍືນຍົງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ.

# ເປົ້າຫມາຍສະຫັດສະວັດດ້ານການພັດທະນາ

**ເປົ້າຫມາຍທີ 8: ສ້າງຄູ່ຮ່ວມມືແຫ່ງການພັດທະນາທົ່ວໂລກ.**

**ເປົ້າຫມາຍທີ 9:** ຫລຸດຜ່ອນຜົນກະທົບຂອງລະເບີດທີ່ຍັງບໍ່ທັນແຕກໃນລາວ ເຊິ່ງເປົ້າຫມາຍແມ່ນການເພີ່ມ ເນື້ອທີ່ທີ່ສຳເລັດການເກັບກູ້ລະເບີດບໍ່ທັນແຕກໃຫ້ໄດ້ 20,000 ເຮັກຕາ ແລະ ຫລຸດຜ່ອນການບາດເຈັບ ຫລື ເສຍຊີວິດຈາກລະເບີດທີ່ບໍ່ທັນແຕກໃຫ້ຕ່ຳກວ່າ 75 ກໍລະນີຕໍ່ປີ ໃນປີ 2015.

# ການປຽບທຽບການພັດທະນາມະນຸດ ແລະ ເປົ້າຫມາຍສະຫັດສະວັດ

| **ການພັດທະນາມະນຸດ** | **ເປົ້າໝາຍສະຫັດສະວັດ** |
|---|---|
| • ການມີຊີວິດທີ່ຍືນຍາວ ແລະ ແຂງແຮງ | ເປົ້າໝາຍທີ 4,5 ແລະ 6 |
| • ການໄດ້ຮັບການສຶກສາ | ເປົ້າໝາຍທີ2 ແລ 3 |
| • ຊີວິດພາຍໃຕ້ມາດຕະຖານທີ່ເໝາະສົມ | ເປົ້າໝາຍທີ 1 |
| • ການມີສະພາບແວດລ້ອມທີ່ຍືນຍົງ | ເປົ້າໝາຍທີ 7 |
| • ຄວາມສະເຫມີພາບລະຫວ່າງຍິງ-ຊາຍ | ເປົ້າໝາຍທີ 3 |
| • ການພັດທະນາມະນຸດຊຸກຍູ້ໃຫ້ມີການຮ່ວມມືເພື່ອການພັດທະນາໃນທົ່ວໂລກ | ເປົ້າໝາຍທີ 8 |

# ເປົ້າຫມາຍສະຫັດສະວັດດ້ານການພັດທະນາ

MDGs ໄດ້ຮັບການຮັບຮອງເອົາໂດຍສະຫະປະຊາຊາດໃນປີ 2000 ເພື່ອບັນລຸພາຍໃນປີ 2015

MDGs ໄດ້ກາຍມາເປັນພື້ນຖານສໍາລັບເປົ້າຫມາຍການພັດທະນາແບບຍືນຍົງ (SDGs) ທີ່ໄດ້ຮັບຮອງໃນປີ 2015 ເພື່ອບັນລຸພາຍໃນປີ 2030.

# ການພັດທະນາມະນຸດ ແລະ ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ

ຄຳວ່າປະເທດດ້ອຍພັດທະນາ ຄວາມຫມາຍໂດຍກວ້າງແມ່ນປະເທດທີ່ມີລາຍໄດ້ຕ່ຳ ແລະ ເປັນປະເທດທີ່ໄດ້ຮັບຜົນກະທົບຈາກໂຄງສ້າງທີ່ເປັນສິ່ງກີດຂວາງຕໍ່ການພັດທະນາແບບຍືນຍົງທີ່ສຸດ. ຄຳວາປະເທດດ້ອຍພັດທະນານີ້ ແມ່ນໄດ້ເລີ່ມຖືກນຳໃຊ້ໃນປີ 1964 ໃນກອງປະຊຸມສະຫະປະຊາຊາດ ເພື່ອການຄ້າ ແລະ ການພັດທະນາ (UNCTAD). ມາດຖານຂອງປະເທດດ້ອຍພັດທະນາໄດ້ຖືກກຳນົດຂຶ້ນເທື່ອທຳອິດໃນກອງປະຊຸມ UNCTAD ໃນປີ 1968, ມາດຕະຖານດັ່ງກ່າວໄດ້ມີການປັບປຸງເລື້ອຍໆມາ ເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງຂອງໂລກໃນແຕ່ລະໄລຍະ

**ມິຕິດ້ານລາຍໄດ້**: ແມ່ນມາດຕະຖານດ້ານລາຍໄດ້ ເຊິ່ງຖືເອົາລວມຍອດຜະລິດຕະພັນລາຍໄດ້ປະຊາຊາດຕໍ່ຫົວຄົນ (GNI) ຕໍ່ປີເປັນຕົວຊີ້ວັດ ເຊິ່ງມາດຖານດັ່ງກ່າວຈະຖືກປະເມີນໃຫມ່ທຸກໆ 3 ປີ. ຈາກການປະເມີນໃນຄັ້ງລ່າສຸດປີ2012, ປະເທດໃດທີ່ມີລາຍໄດ້ລວມຍອດຜະລິດຕະພັນລາຍໄດ້ປະຊາຊາດຕໍ່ຫົວຄົນຕໍ່າກວ່າ 992 ໂດລາສະຫະລັດ ແມ່ນຈະຖືກບັນຈຸເຂົ້າໃນປະເທດດ້ອຍພັດທະນາ ແລະ ປະເທດທີ່ມີລວມຍອດຜະລິດຕະພັນລາຍໄດ້ປະຊາຊາດຕໍ່ຫົວຄົນສູງກວ່າ 1,190 ໂດລາສະຫະລັດ ແມ່ນຖືວ່າຫລຸດພົ້ນອອກຈາກກຸ່ມປະເທດດ້ອຍພັດທະນາ

**ມິຕິດ້ານການພັດທະນາມະນຸດ**: ແມ່ນມາດຕະຖານດັດຊະນີວັດແທກປັດໄຈສົມບູນຂອງມະນຸດ (HAI) ເຊິ່ງຄິດໄລ່ຈາກສອງມິຕິທີ່ມີການ ພົວພັນກັນກັບການພັດທະນາມະນຸດ ຄື: 1. ມິຕິດ້ານສຸຂະພາບ ແມ່ນໄດ້ມາຈາກສອງຕົວຊີ້ວັດ ຄື: ອັດຕາສ່ວນຂອງປະຊາກອນທີ່ຂາດສານອາຫານ ແລະ ອັດຕາການຕາຍຂອງເດັກນ້ອຍອາຍຸຕໍ່າກວ່າຫ້າປີ; 2. ມິຕິດ້ານການສຶກສາ ເຊິ່ງຄິດໄລ່ຈາກສອງຕົວຊີ້ວັດ ຄື: ອັດຕາການເຂົ້າຮຽນຊັ້ນມັດທະຍົມຂອງເດັກນ້ອຍ ແລະ ອັດຕາການຮູ້ຫນັງສືຂອງຜູ້ໃຫຍ່. ການໃຫ້ນໍ້າຫນັກຂອງບັນດາຕົວຊີ້ວັດທີ່ກ່າວມານັ້ນ ແມ່ນມີນໍ້າໜັກເທົ່າກັນຄື 1/4. ອີງຕາມການກໍານົດຂອງຄະນະກໍາມະການນະໂຍບາຍພັດທະນາ (Committee Development and Policy ຫລື CDP) ໃນປີ 2006 ແລະ ໃຊ້ມາຈົນເຖິງປັດຈຸບັນ, ປະເທດໃດທີ່ມີດັດຊະນີນີ້ທີ່ຕໍ່າກວ່າ 65 ແມ່ນຖືວ່າເປັນປະເທດດ້ອຍພັດທະນາ.

- **ມິຕິດ້ານຄວາມບອບບາງທາງດ້ານເສດຖະກິດ (EVI)**: ແມ່ນການປະເມີນຄວາມສ່ຽງ/ຄວາມບໍ່ຫມັ້ນຄົງ ຫລື ຜົນກະທົບແບບກະທັນຫັນຕໍ່ເສດຖະກິດ-ສັງຄົມ ເຊັ່ນ: ໄພພິບັດຕ່າງໆ

ດັດຊະນີດັ່ງກ່າວແມ່ນຄິດໄລຈາກ ສອງມິຕິໃຫຍ່ ຄື: 1. ມິຕິດ້ານໂຄງສ້າງເສດຖະກິດ-ສັງຄົມວັດແທກໂດຍ: ດັດຊະນີຍ່ອຍດ້ານຂະຫນາດ, ດັດຊະນີຍ່ອຍດ້ານພື້ນທີ່, ດັດຊະນີຍ່ອຍດ້ານໂຄງສ້າງເສດຖະກິດ ແລະ ດັດຊະນີຍ່ອຍດ້ານສິ່ງແວດລ້ອມ; 2. ມິຕິດ້ານຜົນກະທົບແບບກະທັນຫັນວັດແທກໂດຍ:ດັດຊະນີຍ່ອຍດ້ານຜົນກະທົບກະທັນຫັນຈາກການຄ້າ ແລະ ດັດຊະນີຍ່ອຍຜົນກະທົບດ້ານທຳມະຊາດ. ການໃຫ້ນ້ຳຫນັກຂອງບັນດາຕົວຊີ້ວັດທີ່ກ່າວມານັ້ນແມ່ນມີນ້ຳຫນັກເທົ່າກັນ ຄື: 1/8. ອີງຕາມການກຳນົດຂອງ GDP ໃນປີ 2006 ແລະ ຖືກນຳໃຊ້ມາຈົນເຖິງປັດຈຸບັນ, ປະເທດໃດທີ່ມີດັດຊະນີEVI ສູງກວ່າ 42 ແມ່ນຖືວ່າເປັນປະເທດດ້ອຍພັດທະນາ.

# ການປຽບທຽບການພັດທະນາມະນຸດ ແລະ ການກຳນົດມາດຖານປະເທດດ້ອຍພັດທະນາ

| ການພັດທະນາມະນຸດ | ມາດຖານປະເທດດ້ອຍພັດທະນາ |
|---|---|
| • ການມີຊີວິດທີ່ຍືນຍາວແລະແຂງແຮງ<br>• ການໄດ້ຮັບການສຶກສາ | ມາດຖານ HAI |
| • ການມີສະພາບແວດລ້ອມທີ່ຍືນຍົງ<br>• ຄວາມປອດໄພຂອງມະນຸດ | ມາດຖານ EVI |
| • ດຳລົງຊີວິດພາຍໃຕ້ມາດຕະຖານທີ່ເໝາະສົມ | ມາດຖານດ້ານລາຍໄດ້ |

ອີງຕາມມາດຖານການກຳນົດປະເທດດ້ອຍພັດທະນານັ້ນຈະເຫັນໄດ້ວ່າ ບັນດາມິຕິ ແລະ ຕົວຊີ້ວັດຕ່າງໆລ້ວນແລ້ວ ແຕ່ມີສາຍພົວພັນກັບການພັດທະນາມະນຸດ. ໂດຍສະເພາະແມ່ນມາດຖານ HAI ທີ່ສອດຄ່ອງກັບການພັດທະນາມະນຸດ ໃນແງ່ມູມຂອງການມີຊີວິດທີ່ຍືນຍາວ ແລະ ແຂງແຮງ ແລະ ການໄດ້ຮັບການສຶກສາ. ສຳລັບມາດຖານຂອງ EVI ແມ່ນສອດຄ່ອງກັບການພັດທະນາມະນຸດໃນດ້ານການມີສະພາບແວດລ້ອມທີ່ຍືນຍົງ ແລະ ຄວາມປອດໄພ. ສຳລັບມາດ ຖານດ້ານເສດຖະກິດແມ່ນສອດຄ່ອງກັບການໃຊ້ມີຊີວິດຢູ່ພາຍໃຕ້ມາດຕະຖານທີ່ເໝາະສົມ.

# homework

1. ການພັດທະນາແບບຍືນຍົງປະກອບມີຈັກເສົາຄ້ຳ? ຈົ່ງອະທິບາຍແຕ່ລະເສົາຄ້ຳ?
2. ເປົ້າຫມາຍສະຫັດສະວັດດ້ານການພັດທະນາ (MDGs) ປະກອບມີຈັກເປົ້າຫມາຍຄືເປົ້າໝາຍໃຫ້ແດ່?

# ເອກະສານອ້າງອີງ/Reference

Human Development Economics. XIONGTOUA,T. SEANGDALA,CH. BOUNTHUNSSENGNGAM,S. KEODOUANGKHAM,P. (2018).Souphanouvong University.

# ຂອບໃຈທີ່ຮັບຟັງ

## Thank you

Email Phavone@su.edu.la

Phone +856 20 28 616 221